ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳມະນາການກວດກາຕາມຫຼັກການຄວາມສ່ຽງ ຂອງທະນາຄານແຫ່ງລັດຫວຽດນາມ



ໃນວັນທີ 21-25 ພະຈິກ 2022 ທີ່ຫ້ອງປະຊຸມໃຫຍ່ຊັ້ນ VII ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດສຳມະນາຫົວຂໍ້ການກວດກາຕາມຫຼັກການຄວາມສ່ຽງ ຂອງທະນາຄານແຫ່ງລັດຫວຽດນາມ ຂຶ້ນ ໂດຍການເປັນປະທານຂອງ ທ່ານ ນ. ຄຳຫຼ້າ ເຮືອນມະນີ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ໃຫ້ກຽດບັນຍາຍສຳມະນາໃນຄັ້ງນີ້ໂດຍ ທ່ານ ນາງ ບຸຍ ທິ ບິກ ຮາ, ນັກກວດກາ, ອົງການກວດກາທະນາຄານ, ທະນາຄານແຫ່ງລັດຫວຽດນາມ ມີບັນດາກົມພາຍໃນ ທຫລ ເຂົ້າຮ່ວມ.





ການສຳມະນາບົດຮຽນການກວດກາຕາມຫຼັກການຄວາມສ່ຽງ ຂອງທະນາຄານແຫ່ງລັດຫວຽດນາມໃນຄັ້ງນີ້ ເປັນຫົວຂໍ້ໜຶ່ງທີ່ສຳຄັນຂອງ ທະນາຄານແຫ່ງ ສປປ ລາວ ເວົ້າລວມ, ເວົ້າສະເພາະກໍຄື ກົມຄຸ້ມຄອງທະນາຄານທຸລະກິດ ໃນການແນ່ໃສ່ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຄຸ້ມຄອງ-ກວດກາ ທະນາຄານທຸລະກິດ ກໍຄືການບຳລຸງກໍ່ສ້າງພະນັກງານກວດກາທະນາຄານທຸລະກິດ ໃຫ້ເປັນມືອາຊີບ ແລະ ມີຄວາມຮູ້-ຄວາມສາມາດ ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່ ຜ່ານ

ການແລກປ່ຽນບົດຮຽນ ແລະ ປະສົບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການການກວດກາທະນາຄານທຸລະກິດຕາມຫຼັກການຄວາມສ່ຽງ ຂອງທະນາຄານແຫ່ງລັດຫວຽດນາມ ເພື່ອນຳມາຜັນຂະຫຍາຍເຂົ້າໃນວຽກງານກວດກາທະນາຄານທຸລະກິດ ຢູ່ ສປປ ລາວ ທີ່ປັດຈຸບັນກຳລັງຫັນໄປສູ່ການຄຸ້ມຄອງຕາມຫຼັກການຄວາມສ່ຽງ ກໍຄືການພັດທະນາວຽກງານຮັກສາສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງທະນາຄານທຸລະກິດໃນ ສປປ ລາວ ແລະ ການຍົກລະດັບວຽກງານດັ່ງກ່າວໃຫ້ສອດຄ່ອງກັບການເຊື່ອມໂຍງ ທັງໃນລະດັບກັບພາກພື້ນ ແລະ ສາກົນ ໃຫ້ມີປະສິດທິພາບຂຶ້ນ.

ສຳມະນາໄດ້ນຳເອົາເນື້ອໃນບົດຮຽນ ແລະ ປະສົບການ ການກວດກາທະນາຄານທຸລະກິດຂອງທະນາຄານແຫ່ງລັດຫວຽດນາມ ເພື່ອນຳໄປໝູນໃຊ້ເຂົ້າໃນວຽກງານກວດກາຂອງຕົນເອງ ໃຫ້ມີປະສິດທິພາບ ແລະ ເກີດດອກອອກຜົນຍິ່ງຂຶ້ນ.




ຂ່າວ ແລະ ພາບ ໂດຍ: ນ. ທິດສະບາ ທຳມະວົງສິງ

*ຮັກບ້ານເກີດເມືອງນອນໃຊ້ຈ່າຍທອນເປັນເງິນກີບ*